ບໍລິສັດ ລາວເວີນ ມະຫາຊົນ
ອາຄານ ລາວ-ໄອເຕັກ, ຖະໜົນ ກຳແພງເມືອງ
ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ, ສປປ ລາວ
ໂທ: (+856) 21 415 477; ແຟັກ: (+856) 21 415 409

ຜົນສຳເລັດຂອງງານວາງສະແດງສິນຄ້າ ໃນງານບຸນນະມັດສະການພະທາດຫລວງ ທີ່ ລາວ-ໄອເຕັກ

ບໍລິສັດ ລາວເວີນ ມະຫາຊົນ ໄດ້ສຳເລັດການຈັດງານ ວາງສະແດງສິນຄ້າ ໃນງານບຸນນະມັດສະການ ພະທາດຫລວງ ທີ່ລາວ-ໄອເຕັກໃນລະຫວ່າງວັນທີ 15 ຫາ 25 ພະຈິກ 2018. ໂດຍພາຍໃນງານ, ຜູ້ມາຢ້ຽມຊົມ ສາມາດເລືອກຊື້ສິນຄ້າທັງພາຍໃນ ແລະ ຕ່າງປະເທດ, ພ້ອມກັນນີ້ ຍັງມີກິດຈະກຳອີກຢ່າງຫລວງຫລາຍເຊັ່ນ: ການສະແດງ ສິລະປະ ພື້ນເມືອງລາວ, ການສະແດງ ກາຍະກຳ ໂດຍຄະນະກາຍາສິນລາວ, ງານຄອນເສີດ ແລະ ການສະແດງຕະລົກໂດຍ ສິລະປິນທີ່ມີຊື່ສຽງໂດ່ງດັ່ງຈາກປະເທດໃກ້ຄຽງ. ບັນດາການສະແດງທີ່ກ່າວມານັ້ນແມ່ນໄດ້ເປີດໃຫ້ຜູ້ຄົນທີ່ມາໃນງານດັ່ງກ່າວເຂົ້າຊົມຟຣີ. ນອກຈາກນີ້, ທີ່ ສູນການຄ້າ ລາວ-ໄອເຕັກ ຍັງໄດ້ຈັດງານປະກວດ ນາງສາວທູດອັດຖະນາທຳ ໃນຮອບຕັດສິນ ໂດຍຈັດຂຶ້ນໃນວັນທີ 23 ພະຈິກ 2018. ດັ່ງນັ້ນ, ຄະນະ ບໍລິຫານ ບໍລິສັດ ລາວເວີນ ມະຫາຊົນ ຈຶ່ງຂໍສະແດງຄວາມຂອບໃຈເປັນຢ່າງສູງ ສຳລັບການຈັດງານວາງສະແດງສິນຄ້າ ແລະ ບັນດາກິດຈະກຳຕ່າງໆ ໃນຄັ້ງ ນີ້ ທີ່ສາມາດດຶງດູດເອົາຜູ້ຄົນເປັນຈຳນວນຫລວງຫລາຍເຂົ້າມາ ລາວ-ໄອເຕັກ ໃນໄລຍະເວລາ 11 ມື້ ຂອງການຈັດງານ.

ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເຂົ້າໄປເບິ່ງເຟສບຸກຂອງພວກເຮົາໄດ້ດັ່ງລຸ່ມນີ້:

1. https://web.facebook.com/iteccexpo/ (ສຳລັບສູນງານວາງສະແດງສິນຄ້າ ລາວ-ໄອເຕັກ)
2. https://web.facebook.com/ITECCMALL/?ref=br_rs (ສຳລັບສູນການຄ້າ ລາວ-ໄອເຕັກ)
3. https://web.facebook.com/IteccOceanPark/?ref=br_rs (ສຳລັບສວນນ້ຳ Ocean Park)











